ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 10 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 1.4.2016

# ຄໍາສັ່ງ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍ ການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 69/ ສພຊ, ວັນທີ 15 ທັນວາ 2015;

- ອີງຕາມ ກົດໝາຍວ່າດ້ວຍ ທະບຽນສານ ສະບັບເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009;

- ອີງຕາມ ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບເລກທີ 01/ ສພຊ, ລົງວັນທີ 08 ທັນວາ 2008;

- ອີງຕາມກົດໝາຍວ່າດ້ວຍການສ້າງນິຕິກໍາ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;

- ອີງຕາມ ໜັງສືສະເໜີ ຂອງກະຊວງ ຍຸຕິທໍາ ສະບັບເລກທີ 94/ກຍ, ລົງວັນທີ 11 ກຸມພາ 2016.

ວຽກງານທະບຽນສານ ເປັນວຽກງານໜຶ່ງ ທີ່ມີບົດບາດສໍາຄັນຂອງຂະແໜງຍຸຕິທໍາ ໃນການຢັ້ງຢືນ ຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຕາມກົດໝາຍ ຂອງສັນຍາ ແລະ ເອກະສານອື່ນ, ແນໃສ່ເພີ່ມທະວີນິຕິທໍາ, ປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທໍາ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

ຜ່ານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ທະບຽນສານ ທີ່ປະກາດໃຊ້ມາແລ້ວ 20 ກວ່າປີ ເຫັນວ່າ ຄວາມຮັບຮູ້ ແລະ ເຂົ້າໃຈ ຂອງສັງຄົມ ເຖິງຄວາມໝາຍ ຄວາມສໍາຄັນ, ຜົນປະໂຫຍດ ທີ່ຈະໄດ້ຮັບຈາກການຢັ້ງຢືນ ໂດຍອົງການທະບຽນສານ ຍັງບໍ່ທັນກວ້າງຂວາງ, ເລິກເຊິ່ງ ແລະ ຍັງມີຄວາມເຂົ້າໃຈບໍ່ຈະແຈ້ງ ລະຫວ່າງ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການທະບຽນສານ ແລະ ສານປະຊາຊົນ. ການຢັ້ງຢືນ ແລະ ການຈົດທະບຽນສານ ຫຼາຍພາກສ່ວນຍັງຖືເບົາ ພາໃຫ້ເກີດມີຫຼາຍສັນຍາ ຫຼື ຫຼາຍເອກະສານ ບໍ່ຖືກຕ້ອງ ຈຶ່ງເປັນສາເຫດໜຶ່ງ ທີ່ພາໃຫ້ເກີດມີຂໍ້ຂັດແຍ່ງ, ສ້າງຄວາມສັບສົນ ໃຫ້ແກ່ການ ຈັດຕັ້ງພັກ-ລັດ, ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ, ເນື່ອງມາຈາກສັນຍາ ແລະ ເອກະສານນັ້ນບໍ່ຖືກຕ້ອງ ຕາມກົດໝາຍແລະ ຄວາມເປັນຈິງ ເປັນຕົ້ນ ພິໄນກໍາ, ລາຍເຊັນ, ລາຍໂປ້ມື, ເອກະສານສໍາເນົາ ແລະ ອື່ນໆ.

ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈ ຂອງສັງຄົມ ກ່ຽວກັບ ວຽກງານທະບຽນສານ ແລະ ເຮັດໃຫ້ ກົດໝາຍວ່າດ້ວຍ ທະບຽນສານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ,

ທັງເປັນການຍົກສູງຄຸນນະພາບໃນການຢັ້ງຢືນສັນຍາ ຫຼື ເອກະສານອື່ນ ໃຫ້ມີຄຸນຄ່າທາງດ້ານກົດໝາຍ, ເປັນຫຼັກຖານໃຫ້ແກ່ການພິຈາລະນາຄະດີຂອງສານ, ຮັບປະກັນການປົກປ້ອງ ສິດ ແລະ ຜົນປະໂຫຍດ ອັນຊອບທຳຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ປະກອບສ່ວນສຳຄັນເຂົ້າໃນການສ້າງຄວາມ ຍຸຕິທຳ ແລະ ສີວິໄລ ຂອງສັງຄົມ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ທະບຽນສານ ແລະ ນິຕິກຳຕ່າງໆ ກ່ຽວກັບ ວຽກງານທະບຽນສານ ຢ່າງເຂັ້ມງວດ ໂດຍໃຫ້ຖືເອົາ ການເຄົາລົບ ແລະ ປະຕິບັດກົດໝາຍ ວ່າດ້ວຍທະບຽນສານ ເປັນຂະບວນການໜຶ່ງທີ່ສຳຄັນໃນການສ້າງສັງຄົມລາວ ໃຫ້ເປັນສັງຄົມທີ່ມີຄວາມຍຸຕິທຳ ແລະ ສີວິໄລ ຕາມແນວທາງຂອງພັກ-ລັດ, ປະກອບສ່ວນອັນສຳຄັນ ເຂົ້າໃນພາລະກິດສ້າງສາ ແລະ ພັດທະນາເສດຖະກິດ-ສັງຄົມຂອງຊາດ.

2. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ ແລະ ພົນລະເມືອງທຸກຄົນ ຮັບຮູ້ ແລະ ປະຕິບັດຢ່າງເປັນເອກະພາບໃນທຸກສັນຍາແລະ ເອກະສານປະເພດຕ່າງໆທີ່ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍວ່າດ້ວຍທະບຽນສານ ຈະຖືວ່າ ເປັນສັນຍາ ຫຼື ເອກະສານ ທີ່ຖືກຕ້ອງ, ສອດຄ່ອງ ແລະ ມີຄຸນຄ່າທາງດ້ານກົດໝາຍ ນັ້ນ, ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານເທົ່ານັ້ນ. ໃນກໍລະນີ ສັນຍາ ຫຼື ເອກະສານ ທີ່ຍັງບໍ່ໄດ້ຮັບການຢັ້ງຢືນ ຈາກອົງການທະບຽນສານນັ້ນ, ໃຫ້ອົງການຈັດຕັ້ງລັດ ທີ່ກ່ຽວຂ້ອງ ແນະນຳບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ນຳໄປຢັ້ງຢືນຄວາມຖືກຕ້ອງຈາກອົງການທະບຽນສານ ທີ່ມີສິດອຳນາດກ່ອນ.

3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ນຳເອົາສັນຍາ ຫຼື ເອກະສານຕ່າງໆ ມາຢັ້ງຢືນຄວາມຖືກຕ້ອງ ທາງດ້ານກົດໝາຍ ຈາກອົງການທະບຽນສານ ນັ້ນ, ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການຕາມກົດໝາຍວ່າດ້ວຍ ທະບຽນສານ ແລະ ລັດຖະບັນຍັດ ຂອງປະທານປະເທດ ທີ່ປະກາດໃຊ້ ໃນແຕ່ລະໄລຍະ.

4. ກະຊວງ ຍຸຕິທຳ ກໍຄືຂະແໜງຍຸຕິທຳທົ່ວປະເທດ ຕ້ອງເພີ່ມທະວີຄວາມເອົາໃຈໃສ່ ປະສານສົມທົບ ແລະ ຊຸກຍູ້ ບັນດາຂະແໜງການ, ອົງການ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດ ແລະ ໂຄສະນາກົດໝາຍວ່າດ້ວຍ ທະບຽນສານ ແລະ ບັນດານິຕິກຳ ກ່ຽວກັບ ວຽກງານທະບຽນສານ ໃຫ້ກວ້າງຂວາງ ແລະ ເລິກເຊິ່ງ ເພື່ອໃຫ້ບັນດາຂະແໜງການ, ອົງການ ແລະ ພົນລະເມືອງທຸກຄົນ ຮັບຮູ້ ແລະ ເຂົ້າໃຈເຖິງຄວາມໝາຍ, ຄວາມສຳຄັນ ແລະ ຜົນປະໂຫຍດ ທີ່ຈະໄດ້ຮັບ ຈາກການຢັ້ງຢືນຄວາມຖືກຕ້ອງ ຂອງບັນດາສັນຍາ ແລະ ເອກະສານຕ່າງໆ ໂດຍອົງການທະບຽນສານ.

5. ໃຫ້ຄະນະພັກ, ອົງການປົກຄອງນະຄອນຫຼວງ, ບັນດາແຂວງ, ເມືອງ ແລະ ເທດສະບານ ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ຂອງອົງການທະບຽນສານ ໃນຂັ້ນຂອງຕົນ. ໃນນີ້, ບ່ອນທີ່ມີການສ້າງຕັ້ງຂຶ້ນແລ້ວ, ກໍໃຫ້ກວດກາ ແລະ ປັບປຸງ ໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ; ບ່ອນໃດ ຫາກຍັງບໍ່ທັນມີການສ້າງຕັ້ງຫ້ອງການ ຫຼື ໜ່ວຍງານ

ທະບຽນສານ ກໍໃຫ້ຄົ້ນຄວ້າ ແລະ ດຳເນີນການສ້າງຕັ້ງ ໃຫ້ເປັນລະບົບຄົບຊຸດ ພ້ອມທັງຊີ້ນຳ-ນຳພາ ອົງການດັ່ງກ່າວ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍ ທະບຽນສານ.

6. ໃຫ້ຄະນະພັກ, ອົງການປົກຄອງນະຄອນຫຼວງ, ບັນດາແຂວງ, ເມືອງ ແລະ ເທດສະບານ ເພີ່ມທະວີຄວາມເອົາໃຈໃສ່ໃກ້ຊິດຕິດແທດ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນ ງົບປະມານ, ສະຖານທີ່ເຮັດວຽກ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ໃຫ້ອົງການດັ່ງກ່າວ ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນຢ່າງເຕັມສ່ວນ ແນໃສ່ຮັບປະກັນການບໍລິການສັງຄົມ ດ້ວຍຄວາມວ່ອງໄວ, ຖືກຕ້ອງ ແລະ ມີປະສິດທິຜົນສູງ, ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ. ພ້ອມກັນນັ້ນ ກໍໃຫ້ເອົາໃຈໃສ່ຄຸ້ມຄອງເງິນລາຍຮັບ ຈາກຄ່າທຳນຽມ ແລະ ຄ່າບໍລິການ ໃນການຈົດທະບຽນ ສັນຍາ ແລະ ເອກະສານຕ່າງໆ ໃຫ້ຖືກຕ້ອງ, ສອດຄ່ອງ ກັບກົດໝາຍ ແລະ ລະບຽບການການເງິນ, ງົບປະມານ.

7. ໃຫ້ກະຊວງ ຍຸຕິທຳ ເພີ່ມທະວີຄວາມເອົາໃຈໃສ່ ໃນການກໍ່ສ້າງ, ບຳລຸງ ແລະ ຍົກລະດັບ ວິຊາສະເພາະ ໃຫ້ພະນັກງານທະບຽນສານຂັ້ນຕ່າງໆ ດ້ວຍຫຼາຍຮູບການ ເປັນຕົ້ນ ການຝຶກອົບຮົມໄລຍະສັ້ນ, ໄລຍະຍາວ ໃຫ້ເປັນລະບົບຕໍ່ເນື່ອງ ເພື່ອໃຫ້ໄດ້ຜູ້ຊຳນານງານ ຫຼື ຜູ້ຊ່ຽວຊານ ໃນວຽກງານດັ່ງກ່າວ ແນໃສ່ຮັບປະກັນຍົກສູງຄຸນນະພາບ ຂອງວຽກງານທະບຽນສານ, ຮັບປະກັນການສະໜອງຂໍ້ມູນທີ່ຊັດເຈນ ໃຫ້ແກ່ການດຳເນີນຄະດີ ຕາມຂະບວນການຍຸຕິທຳ ໃຫ້ມີຄວາມວ່ອງໄວ ແລະ ຖືກຕ້ອງ ທັງຮັບປະກັນ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມເຂັ້ມງວດ ແລະ ສັກສິດ ຫຼາຍຂຶ້ນ.

8. ມອບໃຫ້ກະຊວງ ຍຸຕິທຳ ເປັນເສນາທິການ ໃຫ້ແກ່ລັດຖະບານ ແລະ ເປັນເຈົ້າການ ປະສານສົມທົບ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ, ພ້ອມທັງ ສະຫຼຸບ, ສັງລວມ ແລະ ລາຍງານ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ ເພື່ອຊາບ ແລະ ມີທິດຊີ້ນຳ.

9. ບັນດາທ່ານລັດຖະມົນຕີກະຊວງ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າຄອງນະຄອນຫຼວງ, ບັນດາເຈົ້າແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ.

10. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**

ທອງສິງ ທຳມະວົງ